# ຂັບງື່ມ

## ສິລະປະວັນນະຄະດີພື້ນເມືອງລາວ

❀ ໂດຍ : ກະວິນ ກຽງຄຳຊົນປີ



ວຽງຈັນ, 1997

( ສະຫງວນລິຂະສິດ )

# ຂັບງື່ມ

## ສິລະປະວັນນະຄະດີພື້ນເມືອງລາວ

ໂດຍ : **ກະວິນ ກຽງຄຳຊົນປີ**

ຈັດພິມໂດຍ

**ກົມວັນນະຄະດີ ແລະ ວັດທະນະທຳມະຫາຊົນ**

ພິມຄັ້ງທີໜຶ່ງ, ປີ 1997.

( ສະຫງວນລິຂະສິດ )

# ອັບວື່ມ

## ສິລະປະວັນນະຄະດີພື້ນເມືອງລາວ

✪ **ທີ່ປຶກສາ ກິດຕິມະສັກ** :

ທ່ານ ບົວບານ ວໍລະຂຸນ ຮອງລັດຖະມົນຕີ ກະຊວງຖະແຫລງຂ່າວ
ແລະ ວັດທະນະທຳ

✪ **ຜູ້ໃຫ້ກຳເນີດແກ່ການສ້າງໂຄງການ ອັບວື່ມ ແລະ ບັນນາທິການ** :

ທ່ານ ດຣ. ທອງຄຳ ອ່ອນມະນີສອນ ຫົວໜ້າກົມວັນນະຄະດີ
ແລະ ວັດທະນະທຳມະຫາຊົນ
ທ່ານ ນາງ ດາຣາ ກັນລະຍາ ອະດີດຮອງຫົວໜ້າກົມວັນນະຄະດີ
ແລະ ວັດທະນະທຳມະຫາຊົນ

✪ **ຜູ້ຄົ້ນຄ້ວາ ແລະ ຂຽນກ່ຽວກັບສິລະປະວັນນະຄະດີ ອັບວື່ມ** :

ທ່ານ ກະວີນ ກຽງຄຳຊົນນີ ຫົວໜ້າພະແນກສະໂມສອນວັດທະນະທຳ
ແລະ ສວນສາທາລະນະ
ກົມວັນນະຄະດີ ແລະ ວັດທະນະທຳມະຫາຊົນ

✪ **ເພື່ອນຮ່ວມງານໃນການເກັບກຳຂໍ້ມູນ ແລະ ຊ່ວຍວຽກບໍລິຫານຕ່າງ ໆ** :

ທ່ານ ຄຳພອນ ອຸ່ນດາລາ ຢູ່ພະແນກກະແຫລງຂ່າວ ແລະ ວັດທະນະທຳ ແຂວງວຽງຈັນ

ທ່ານ ສີທາ ອຸ່ນຊະນະມີໄຊ

ທ່ານ ຄຳຫລ້າ ຍອຍສາຍຄຳ

ທ່ານ ຈັນລາ ດວງມາລາ

✪ **ຕິຄອມພີວເຕີ ແລະ ຈັດໜ້າ** :

ທ່ານ ຄຳສະຫວ່າງ ເພັດພູທອນ

✪ **ຜູ້ຂຽນໂນດດົນຕີຂັບງື່ມ** :

ຫວັງເສີດ ຈາກວາລະສານວັນນະສິນ

✪ **ອອກແບບຫລັງປົກ** :

ທ່ານ ກະວິນ ກຽງຄຳຊົມນີ

✪ **ເຈົ້າຂອງໂຄງການ** :

ກົມວັນນະຄະດີ ແລະ ວັດທະນະທຳມະຫາຊົນ

**ຈັດພິມໂດຍ** : ກົມວັນນະຄະດີ ແລະ ວັດທະນະທຳມະຫາຊົນ

ພິມທີ່ : ລັດວິສາຫະກິດ ໂຮງພິມແຫ່ງລັດ

ຂະໜາດ : 18 × 26 ຊມ, ຈຳນວນ : 1.000 ຫົວ.

ຕາມທະບຽນເລກທີ : 67/ພຫປ, 140697.

ພິມຄັ້ງທີໜຶ່ງ, ປີ 1997 ( ພ.ສ.2540 ).

( ສະຫງວນລິຂະສິດ )

## ບົດຄຳນຳ
## ຈາກຜູ້ຄົ້ນຄ້ວາ ແລະ ຂຽນກ່ຽວກັບສິລະປະວັນນະຄະດີຂັບງື່ມ

✪ ບັນດາທ່ານຜູ້ອ່ານ, ທ່ານນັກຄົ້ນຄ້ວາ ຫລື ນັກວິໄຈທາງສັງຄົມສາດທີ່ນັບຖື, ບົດຂຽນກ່ຽວກັບການພົວພັນສິລະປະວັນນະຄະດີ**ຂັບງື່ມ**ສະບັບນີ້, ຂ້າພະເຈົ້າໄດ້ຄົ້ນຄ້ວາ ແລະ ຂຽນຂຶ້ນມາດ້ວຍຈຸດປະສົງແນໃສ່ສືບທອດໄວ້ ຊຶ່ງມູນມໍລະດົກດ້ານສິລະປະຂັບລຳຂອງຊາດ ຕາມແນວທາງນະໂຍບາຍຂອງພັກ ແລະ ລັດ. ຕໍ່ການອະນຸລັກ ແລະ ສົ່ງເສີມສິລະປະວັດທະນະທຳຂອງລາວເຮົາ, ພ້ອມນີ້ກໍ່ເພື່ອຮັກສາໄວ້ຊຶ່ງເອກະລັກກ່ຽວກັບຂັບງື່ມໃຫ້ຍືນຍົງ, ເພາະເປັນພູມປັນຍາ, ຫົວຄິດປະດິດສ້າງຂອງບັນພະບູລຸດ ຫລື ຄົນບູຮານລາວໃນສະໄຫມກ່ອນໄດ້ປະດິດຄິດສ້າງໄວ້ໃຫ້ ພ້ອມນີ້ກໍ່ເພື່ອເປັນປັດໃຈນຳໄປສູ່ຄົນຣຸ່ນຫລັງ ໆ ໃຫ້ໄດ້ຮູ້ຕົ້ນປາຍສາຍເຫດ ຫລື ສາຍກ່ຽວພັນໃນການຂັບງື່ມນີ້ດ້ວຍ.

ສິລະປະວັນນະຄະດີຂັບງື່ມ ໄດ້ຮັບຄ່ານິຍົມສູງຢູ່ໃນອະດີດຈົນເຖິງປັດຈຸບັນ, ດັ່ງນັ້ນ ຂັບງື່ມຈຶ່ງມີຄວາມຈຳເປັນ ແລະ ເປັນຄວາມຕ້ອງການອັນແຮງກ້າ ສຳລັບຄົນຍຸກປັດຈຸບັນ ແລະ ຍຸກຕໍ່ ໆ ໄປໃນການທີ່ຢາກຈະຮູ້ເຖິງຕົ້ນປາຍສາຍເຫດ ແລະ ການກຳເນີດເກີດຂຶ້ນຂອງຂັບງື່ມດັ່ງກ່າວນີ້, ທັງນີ້ກໍ່ເພື່ອນຳໄປສູ່ການສຶກສາຄົ້ນຄ້ວາ ຫລື ຮຽນຮູ້ເຖິງຈຸດພິເສດຂອງຂັບລຳປະເພດນີ້ດ້ວຍ. ເພື່ອຕອບສະຫນອງຈິດໃຈດັ່ງກ່າວ ຂ້າພະເຈົ້າຈຶ່ງໄດ້ວາງໂຄງການໃນການລົງເກັບກຳຂໍ້ມູນຢູ່ກັບບ້ານເກີດເມືອງນອນຂອງ**ຂັບງື່ມ**ດັ່ງກ່າວນີ້ ( ແຂວງວຽງຈັນ ) ຮ່ວມກັບພະແນກກະແຫລງຂ່າວ ແລະ ວັດທະນະທຳແຂວງວຽງຈັນ ແລະ ພາຍໃຕ້ການຊີ້ນຳຂອງຫົວຫນ້າກົມວັນນະຄະດີ ແລະ ວັດທະນະທຳມະຫາຊົນ ຊຶ່ງນຳໂດຍທ່ານ ດຣ. ທອງຄຳອອນມະນີສອນ, ໂຄງການດັ່ງກ່າວນີ້ ໄດ້ຮັບທຶນອຸປະຖຳຈາກໂຄງການໃບລານລາວ ( ໂຄງການຮ່ວມມືລາວ-ເຢຍລະມັນ ) ໃນການເກັບກຳຂໍ້ມູນ, ປີ 1994 ການລົງເກັບກຳຂໍ້ມູນ ກໍ່ໄດ້ກຳນົດຂອບເຂດຕາມຫລັກການວິໄຈທາງສັງຄົມສາດ ເຊັ່ນ ແນໃສ່ຫມໍຂັບງື່ມຜູ້ອາວຸໂສ, ຄົນພື້ນເມືອງຜູ້ອາວຸໂສ ແລະ ຜູ້ທີ່ມີພູມປັນຍາແບບ ພື້ນບ້ານ, ຊຶ່ງເຂົາເຈົ້າໄດ້ເປັນຕົວແທນໃຫ້ແກ່ຊາວຊົນສ່ວນໃຫຍ່ໃນແຂວງວຽງຈັນ. ການເກັບກຳຂໍ້ມູນດັ່ງກ່າວນີ້, ເຖິງວ່າເວລາມັນຈະສັ້ນ, ແຕ່ກໍ່ສາມາດຮັບປະກັນໃຫ້ເຂົ້າສູ່ຄວາມສົມບູນແບບພໍສົມຄວນ, ຢ່າງໃດກໍ່ດີຜູ້ຂຽນເອງກໍບໍ່ປາສະຈາກໄດ້ໃນຂໍ້ຂາດຕົກບົກພ່ອງໃນການເກັບກຳຂໍ້ມູນ ຫລື ສາຍກ່ຽວພັນທາງປະຫວັດສາດກັບສິລະປະວັນນະຄະດີຂັບງື່ມສະບັບນີ້. ຈຶ່ງຂໍໃຫ້ບັນດາທ່ານຜູ້ອ່ານໄດ້ປະກອບສ່ວນຕື່ມອີກເພື່ອໃຫ້ປຶ້ມຂັບງື່ມ ສະບັບນີ້ເຂົ້າສູ່ຄວາມສົມບູນ ແບບໃນການພິມຊຸດທີສອງ.

ຈາກຜົນງານການເກັບກຳຂໍ້ມູນ, ຈາກການຄົ້ນຄ້ວາ ກໍ່ເປັນປັດໃຈນຳໄປສູ່ການຂຽນໃຫ້ມີການປະກົດຕົວກ່ຽວກັບປຶ້ມອັບງື່ມນີ້ດ້ວຍ ແລະ ທັງນີ້ກໍ່ເພື່ອແນໃສ່ໃຫ້ຄົນຍຸກປັດຈຸບັນ ແລະ ຍຸກຕໍ່ ໆ ໄປໄດ້ອ່ານ, ໄດ້ຄົ້ນຄ້ວາ. ກ້າວ່າຄົນລາວໃນຍຸກຕໍ່ ໆ ໄປ ຫາກມີຄວາມມັກ, ມີຄວາມປາກະໜາຢາກຮຽນເປັນໝໍອັບງື່ມ ແຕ່ຂາດຄູສອນແລ້ວ, ປຶ້ມຫົວນີ້ກໍ່ພໍຈະຊ່ວຍໄດ້ໃນຂັ້ນພື້ນຖານເພື່ອກ້າວໄປເປັນໝໍອັບໄດ້ໃນອ້າງໜ້າ.

ໂຄງການເກັບກຳຂໍ້ມູນ **ອັບງື່ມ** ບໍ່ແມ່ນໂຄງການວິໄຈທາງສັງຄົມສາດ ມັນພຽງແຕ່ເປັນການວິເຄາະຂໍ້ມູນ ໃຫ້ເຂົ້າກັບກັບປະຫວັດສາດຂອງມັນເທົ່ານັ້ນ ແລະ ກໍບໍ່ໄດ້ຕີຄວາມເລິກໄປສູ່ມະນຸດວິທະຍາ, ເພາະມັນພຽງແຕ່ເປັນຜະລິດຕະພັນວັດທະນະທຳ ດ້ານສິລະປະວັນນະຄະດີ ຈາກຜົນບວກຂອງວັດຖຸ ແລະ ຈິດໃຈເທົ່ານັ້ນ ຫລື ກໍ່ຄວນໄດ້ເຂົ້າໃຈງ່າຍ ໆ ວ່າ ມັນເປັນປະກົດການຂອງສັງຄົມ, ມັນເກີດຂຶ້ນມາໄດ້ດ້ວຍຜົນບວກສອງປັດໃຈຄື : ສັນຊາດຍານ ແລະ ສະຕິຂອງຄົນ, ເພາະມະນຸດເປັນຜູ້ສ້າງວັດຖຸປັດໃຈໃຫ້ແກ່ສັງຄົມ. ຈາກນັ້ນ ອັບງື່ມກໍ່ເປັນວັດທະນະທຳດ້ານຈິດໃຈ ຫລື ເປັນອາຫານດ້ານຈິດໃຈ ທີ່ຂະຫຍາຍຕົວຂຶ້ນຕາມກາລະເທສະຂອງມັນ. ສະນັ້ນອັບງື່ມ ຈຶ່ງແມ່ນຜະລິດຕະພັນວັດທະນະທຳ ຫລື ຄຸນຄ່າຂອງຈິດໃຈນັ້ນເອງ.

ວຽງຈັນ, ວັນທີ 15/11/1996

ຈາກຜູ້ຂຽນ

**ກະວິນ ກຽງຄຳຊົນປີ**



## ບົດປະກອບຄຳເຫັນ
## ຂອງ
## ທ່ານ ບົວບານ ວໍລະຂຸນ

**ຮອງລັດຖະມົນຕີ**
**ກະຊວງການຖະແຫລງຂ່າວ ແລະ ວັດທະນະທຳ**

**ຂັບງື່ມ** ແມ່ນສິລະປະວັນນະຄະດີພື້ນເມືອງລາວອີກປະເພດຫນຶ່ງ ໃນຈຳນວນຂັບລຳທີ່ຄົງຕົວ ແລະ ຂະຫຍາຍຕົວຢູ່ລາວເຮົາໃນປັດຈຸບັນ. ຂັບງື່ມ ແມ່ນສິລະປະວັດທະນະທຳດ້ານຈິດໃຈ ແລະ ກໍ່ເປັນອາຫານດ້ານຈິດໃຈໃຫ້ຄວາມບັນເທີງ ທີ່ບໍ່ເຄີຍເຫືອດແຫ້ງໄປຈາກປະຊາຊົນພົນລະເມືອງ ຢູ່ໃນແຂວງວຽງຈັນ, ກຳແພງນະຄອນວຽງຈັນ ກໍ່ຄືທົ່ວປະເທດ.

ຂັບງື່ມ ຍັງເປັນພູມປັນຍາຂອງປູ່ຍ່າຕາຍາຍ ຫລື ບັນພະບູລຸດລາວເຮົາ ໄດ້ປະດິດຄິດສ້າງຮູບແບບໄວ້ໃຫ້ ໂດຍສືບເນື່ອງຈາກຣຸ່ນຄົນ ຕົກທອດໃສ່ຣຸ່ນຄົນຈົນເຖິງປັດຈຸບັນນີ້. ຂັບງື່ມເປັນສິລະປະວັດທະນະທຳອັນລ້ຳຄ່າ, ເປັນສິ່ງເອກອ້າງທະນົງໃຈແກ່ລາວເຮົາທຸກຄົນ, ຈຶ່ງເປັນຫນ້າສັນລະເສີນໃນການຂຽນ ແລະ ຈັດເປັນປື້ມອ່ານຂຶ້ນ ເພື່ອອະນຸລັກ ແລະ ສົ່ງເສີມໃຫ້ສິລະປະຂັບລຳປະເພດນີ້ ຍືນຍົງ ແລະ ປະຍຸກຂຶ້ນສູ່ກາລະສະໄຫມນັບມື້.

ປື້ມສິລະປະວັນນະຄະດີກອນຂັບງື່ມສະບັບນີ້ ຈະໄດ້ເປັນແມ່ແບບເຮັດໃຫ້ຄົນລາວຍຸກນີ້ ແລະ ຍຸກຕໍ່ ໆ ໄດ້ຮູ້ຈັກສາຍກ່ຽວພັນ ແລະ ເລື່ອງລາວຂອງຂັບງື່ມປະເພດນີ້ຢ່າງກວ້າງຂວາງ, ແລ້ວສືບຕໍ່ອະນຸລັກຮັກສາຕໍ່ ໆ ໄປ, ເພື່ອເປັນສັນຍາລັກແຫ່ງຄວາມຫມາຍບອກເຖິງຊາດ ທີ່ມີອະລະຍະທຳມາແຕ່ເຫິງນານ.

ຈຶ່ງຂໍຊົມເຊີຍຕໍ່ຜົນງານ ຫົວຄິດປະດິດສ້າງ ຂອງນັກວິຊາການຜູ້ໄດ້ອອກແຮງຄົ້ນຄວ້າ ແລະ ຂຽນສາລະຄະດີຂັບງື່ມດັ່ງກ່າວນີ້ຂຶ້ນມາຈົນໄດ້. ນັບຕັ້ງແຕ່ຄວາມເປັນມາ, ສ່ວນປະກອບສ້າງຕ່າງ ໆ ຈົນຕະຫລອດຮອດວິທີຮຽນ ແລະ ຂັ້ນຕອນຂອງກອນຂັບຜະຫຍາ. ສະນັ້ນປື້ມຂັບງື່ມນີ້ຈຶ່ງເຂົ້າສູ່ຄວາມສົມບູນແບບພໍຄວນ, ແຕ່ຢ່າງໃດກໍ່ຕາມ ຜູ້ຂຽນຄວນຈະປ້ອນ ຂໍ້ມູນເຂົ້າໄປໃຫ້ເລິກເຊິ່ງກວ່ານີ້ ໃນສະບັບພິມຊຸດຕໍ່ໄປ. ເພື່ອຕອບສະຫນອງທ່ານຜູ້ອ່ານ ຜູ້ຄົ້ນຄວ້າໄດ້ຮູ້ ແລະ ໄດ້ຮັບຂໍ້ມູນໄວ້ເປັນຄັງຄວາມຮູ້.

ໃນນາມກະຊວງຖະແຫລງຂ່າວ ແລະ ວັດທະນະທຳ, ໃນນາມສ່ວນຕົວ, ອີກເທື່ອໜຶ່ງ ຈຶ່ງຂໍຊົມເຊີຍຜົນສຳເລັດ ແລະ ຄວາມມານະອົດທົນຂອງນັກວິຊາການ ພ້ອມດ້ວຍເພື່ອນຮ່ວມ ງານໃນການເກັບກຳຂໍ້ມູນ ເຮັດໃຫ້ປຶ້ມດັ່ງກ່າວນີ້ ປະກົດຕົວອອກສູ່ສັງຄົມລາວໃນຍຸກປັດຈຸບັນ.

ປຶ້ມອັບຮຶ່ມຫົວນີ້ ຍັງເປັນຜະລິດຕະພັນວັດທະນະທຳອັນໃຫມ່ ຈາກກົມວັນນະຄະດີ ແລະ ວັດທະນະທຳມະຫາຊົນ ກໍ່ຄືກະຊວງຖະແຫລງຂ່າວ ແລະ ວັດທະນະທຳ. ອີກປະການຫນຶ່ງກໍ່ ຂໍໃຫ້ຜູ້ອ່ານ, ຜູ້ຄົ້ນຄວ້າຈົ່ງມີສະຕິ ແລະ ຕື່ນຕົວຕໍ່ການສົ່ງເສີມ, ອະນຸລັກຮັກສາສິລະປະວັດທະ ນະທຳລາວເຮົາໃຫ້ຍືນຍົງ ແລະ ຂະຫຍາຍຕົວຂຶ້ນເປັນກ້າວ ໆ. ເຮັດໃຫ້ພື້ນຖານວັດທະນະທຳ ສິລະປະວັນນະຄະດີພື້ນເມືອງລາວ ໄດ້ຮັບການຂຸດຄົ້ນອອກມາຮັບໃຊ້ຫນ້າທີ່ການເມືອງຂອງ ພັກ-ລັດກໍ່ຄືສັງຄົມລາວຫລາຍຂຶ້ນນັບມື້, ເຮັດໃຫ້ພວກເຮົາມອງເຫັນໄດ້ຊັດໃນເອກະລັກ ແລະ ຄວາມສົມບູນແບບຂອງພວກເຮົາ, ທັງເປັນການສົ່ງເສີມຫົວຄິດປະດິດສ້າງ ພູມປັນຍາຊາວ ບ້ານໃຫ້ໄດ້ປາກົດຕົວຂຶ້ນສູ່ເວທີສັງຄົມ ເພື່ອເປັນການອົບຮົມບົ່ມເພາະມະຫາຊົນ, ສ້າງຊີວິດ ວັດທະນະທຳໃຫ້ອຸດົມຮັ່ງມີ ແລະ ມີລັກສະນະປະຊາຊົນ ຢ່າງມີຊີວິດຊີວາອັນແທ້ຈິງ.

**ຂໍຂອບໃຈ**

ວຽງຈັນ, ວັນທີ...10../..06...1997

ຮອງລັດຖະມົນຕີ

ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ

**ບົວບານ ວໍລະຂຸນ**



## ບົດປະກອບຄຳເຫັນ
## ຂອງ
## ທ່ານ ດຣ. ທອງຄຳ ອ່ອນມະນີສອນ

## ຫົວໜ້າກົມ
## ວັນນະຄະດີ ແລະ ວັດທະນະທຳມະຫາຊົນ

**ປື້ມອັບງື່ມ**ເຫລັ້ມນີ້ ເປັນຄູ່ມືວັນນະກຳທີ່ມີຄຸນຄ່າສູງສົ່ງ ຊຶ່ງໄດ້ຮັບການຄົ້ນຄ້ວາຈາກຄັງສາງວັນນະຄະດີພື້ນເມືອງລາວ ທີ່ນັກປາດຜູ້ມີພູມປັນຍາປີຊາສາມາດກໍ່ຄືບັນພະບູລຸດລາວທີ່ມີພູມກຳເນີດ ຢູ່ລຽບຕາມແຄມແມ່ນ້ຳງື່ມ ກໍ່ຄືແຂວງວຽງຈັນໃນປັດຈຸບັນ. ປື້ມເຫລັ້ມນີ້ ໄດ້ຄົ້ນຄ້ວາຮຽບຮຽງ ແລະ ຈັດພິມຂຶ້ນມາໄດ້ກໍ່ຍ້ອນການຮ່ວມມືປະສານງານຢ່າງແໜ້ນກັບຫລາຍພາກສ່ວນຫລາຍຊັ້ນຄົນ ນັບແຕ່ສູນກາງລົງຮອດທ້ອງຖິ່ນຮາກຖານ.

ໃນນາມກົມວັນນະຄະດີ ແລະ ວັດທະນະທຳມະຫາຊົນ ມີຄວາມພາກພູມໃຈເປັນຢ່າງຍິ່ງ ທີ່ໄດ້ເຫັນປື້ມເຫລັ້ມນີ້ເກີດຂຶ້ນມາ ດ້ວຍການຄົ້ນຄ້ວາ ຮຽບຮຽງ ເກັບກຳຂໍ້ມູນໂດຍທ່ານກະວີນ ກຽງຄຳຊົນນີ ນັກວິຊາການຄົ້ນຄ້ວາວັດທະນະທຳປະຈຳກົມ ພ້ອມດ້ວຍເພື່ອນຮ່ວມງານນັບແຕ່ສູນກາງລົງຮອດຮາກຖານ ( ແຂວງວຽງຈັນ ).

ເປັນການເຊື່ອຖືກັນໄດ້ວ່າ **ປື້ມອັບງື່ມ** ເຫລັ້ມນີ້ ແມ່ນໄດ້ປາກົດຕົວຂຶ້ນ ໃນດິນແດນລາວເວົ້າລວມ ແລະ ດິນແດນຖິ່ນຖານຊາວລຽບງື່ມ ( ແຂວງວຽງຈັນ ) ເວົ້າສະ ເພາະຊຶ່ງມັນໄດ້ສ່ອງແສງໄຟເພີ່ມຄວາມຮຸ່ງແຈ້ງ ໃຫ້ແກ່ດວງປັນຍາຂອງທ່ານຜູ້ອ່ານ, ຜູ້ຄົ້ນຄ້ວາໄດ້ເຂົ້າໃຈເລິກເຊິ່ງເຖິງລົດຊາດດ້ານວັນນະຄະດີພື້ນເມືອງລາວ ຢ່າງແທ້ຈິງທັງເປັນການແນໃສ່ອະນຸລັກປົກປັກຮັກສາ ແລະ ເສີມຂະຫຍາຍໃຫ້ສົມບູນຍິ່ງຂຶ້ນຊຸກໄຊ້ທັງສະແດງເຖິງພູມປັນຍາອັນສະຫລາດສະຫລຽວຄົມແຫລມ ຂອງນັກປາດອາຈານທີ່ເປັນນັກແຕ່ງກາບກອນ, ກອນຜະຫຍາ, ເປັນໝໍອັບ ແລະ ໝໍອັບງື່ມທັງໃນອະດີດ ແລະ ປັດຈຸບັນ.

ນອກຈາກນີ້ແລ້ວ ບັນດາທ່ານນັກອ່ານ, ນັກຄົ້ນຄ້ວາ, ນັກອະນຸລັກທັງຫລາຍຈະຊາບຊຶ້ງຕື່ງມະໂນດ້ານພູມປັນຍາອັນແຫລມຄົມເລິກເຊິ່ງ ແລະ ອຸດົມສົມບູນທາງດ້ານເນື້ອໃນອັນເຕັມໄປດ້ວຍລັກສະນະຊາດ, ລັກສະນະປະຊາຊົນ ແລະ ລັກສະນະ ກ້າວໜ້າ.

ກົມວັນນະຄະດີ ແລະ ວັດທະນະທຳມະຫາຊົນ ຂໍຊົມເຊີຍນ້ຳໃຈ ແລະ ສະຕິປັນຍາ, ແຮງອຸທິດ ເສຍສະຫລະ ຂອງທ່ານ ກະວີນ ກຽງຄຳຊົນນີ ພ້ອມດ້ວຍເພື່ອນຮ່ວມງານທີ່ໄດ້ມີຄວາມພາກພຽນ ຄົ້ນຄ້ວາຮຽບຮຽງໄດ້ສຳເລັດຜົນ ພ້ອມທັງໄດ້ຈັດພິມອອກຮັບໃຊ້ທ່ານຜູ້ອ່ານ ແລະສັງຄົມທົ່ວໄປ, ຂໍຊົມເຊີຍ ແລະ ຂອບອົກຂອບໃຈນຳບັນດາທ່ານ ບັນດາສະຫາຍຜູ້ໃຫ້ຂໍ້ມູນ, ຕຳນານ, ລາຍລັກອັກສອນ, ສ້າງທຸກເງື່ອນໄຂ ທັງອຳນວຍຄວາມສະດວກທຸກປະການ ແລະ ສະໜັບສະໜູນມາແຕ່ຕົ້ນຕະຫລອດປາຍ.

ຫວັງຢ່າງຍິ່ງວ່າ **ປື້ມອັບວື່ມ** ເຫລັ້ມນີ້ ຄົງຈະນຳເອົາຄຸນຄ່າທາງດ້ານສິລະປະອັບລຳພື້ນເມືອງມາໃຫ້ແກ່ທ່ານຜູ້ອ່ານໄດ້ເປັນຢ່າງດີ ພ້ອມທັງເປັນການອະນຸລັກປົກປັກຮັກສາ ແລະເສີມຂະຫຍາຍສິລະປະວັນນະຄະດີດ້ານນີ້ໃຫ້ເປັນມໍລະດົກຕົກທອດ ເຖິງອະນຸຊົນຮຸ່ນຫລັງສືບຕໍ່ໄປຕະຫລອດກາລະນານ ແລະ ເສີມຂະຫຍາຍໃຫ້ຄົງຢູ່ຄູ່ກັບຊາດລາວ.

**ຂອບໃຈ**

ວຽງຈັນ, ວັນທີ 12 / 07 / 1997

ຫົວໜ້າກົມວັນນະຄະດີ ແລະ ວັດທະນະທຳມະຫາຊົນ

**ດຣ. ທອງຄຳ ອ່ອນມະນີສອນ**

# ສິລະປະວັນນະຄະດີລາວ ແລະ ຈຸດເລີ່ມຕົ້ນ

* ວັດທະນະທຳທາງດ້ານສິລະປະຂັບລຳຂອງລາວເຮົາ ສ່ວນໃຫຍ່ແມ່ນໄດ້ກຳເນີດ ຫລື ຈຸດເລີ່ມທາງດ້ານສຳນຽງສຽງຂັບລຳມາຈາກການໄຫວ້ວອນຜີ ເຊັ່ນ : ການບວງສວງຜີ, ການຄວດຜີ, ການບະຜີ ແລະ ການເຢົາຜີເປັນຕົ້ນ. ການດຳເນີນພິທີກຳຕ່າງ ໆ ດັ່ງກ່າວນີ້ ໄດ້ສະແດງອອກຕາມລະດູການຕ່າງ ໆ ທີ່ຜູ້ຖືສາສະໜາຜີກະທຳຂຶ້ນ.

ປະຊາຊົນພົນລະເມືອງລາວເຮົາ ນັບເປັນພັນກວ່າປີກ່ອນນີ້ ພາກັນຖືຜີໃນຫລາຍຮູບແບບ, ເພື່ອເປັນທີ່ເພິ່ງທາງໃຈ ເນື່ອງຈາກແຕ່ກ່ອນລະດັບວິທະຍາສາດຂອງຄົນຍັງບໍ່ທັນສູງ ແລະ ບໍ່ຮູ້ຈັກວິເຄາະເຖິງປາກົດການທາງທຳມະຊາດ, ຈາກນັ້ນຈຶ່ງພາກັນງຶດງໍ້ອັດສະຈັນປາກົດການຕ່າງ ໆ, ທັງຄິດວ່າ ຜີສາງ ຫລື ເທວະດາຟ້າແຖນເປັນຜູ້ກໍ່ຂຶ້ນແລ້ວກືວ່າ ປາກົດ ການເຫລົ່ານັ້ນເປັນເທວາລະທັດ. ຈາກນັ້ນກໍ່ຄິດວ່າ ຟ້າແຖນເປັນຜູ້ກໍ່ກຳທຳເຂັນ ໃຫ້ຄົນ ເຮົາ, ສິ່ງດັ່ງກ່າວເປັນສາຍເຫດພາໃຫ້ຄົນເຮົາໄດ້ພາກັນຖືຜີ ຕໍ່ມາຈຶ່ງມີການຖືພາມ ( ຮິນ ດູ ) ແລະ ທັດຈາກນັ້ນມາກໍ່ພາກັນຖືສາສະໜາພຸດ ( ໃນປີ ຄ.ສ. 1353 ).

ໃນພິທີກຳຕ່າງ ໆ ກ່ຽວກັບການຖືຜີນັ້ນ ລ້ວນແລ້ວແຕ່ໄດ້ເອີ່ຍຄຳວິງວອນໂດຍພູ່ອອກເປັນສຽງ ຫລື ສຳນຽງເພາະກ່າຍກັນ ຊຶ່ງມາໃນທຳນອງຮ້ອຍກອງ ຫລື ຮ້ອຍແກ້ວເພື່ອເປັນການຂໍຂະມະໂທດ ຫລື ຂໍຄວາມຊ່ວຍເຫລືອຈາກຟ້າແຖນ ເຊັ່ນ ການເຢົາຜີເພື່ອໄກ່ກອນເອົາຜູ້ເຈັບປ່ວຍໃຫ້ຫາຍ, ເຂົ້າໃຈວ່າ ຜີສາງເປັນຜູ້ລົງໂທດຈຶ່ງຄ່ອຍເຈັບໄຊ.

ພຶດຕິກຳທີ່ກະທຳກັບຜີດັ່ງກ່າວນີ້ ລ້ວນແລ້ວແຕ່ອອນຫວານ, ພຽບພ້ອມໄປດ້ວຍກິລິຍາທັງສາມ. ຍ້ອນຄວາມອ່ອນວອນທີ່ສະທ້ອນອອກມາພ້ອມກັບບຸກຄະລິກກະພາບອັນອອນນ້ອມນັ້ນເອງເປັນເງື່ອນໄຂໃຫ້ພື້ນຖານສິລະປະວັນນະຄະດີ, ໂດຍສະເພາະແມ່ນສຽງ ຫລື ສຳນຽງໄດ້ກາຍມາສູ່ການຕັ້ງສັນຊາດຍານໃຫ້ແກ່ຈຸດເລີ່ມ ແລ້ວກ້າວໄປສູ່ປະດິດຄິດຄົ້ນຂຶ້ນມາອີກຫລາຍຮູບແບບຂອງສຳນຽງສຽງຂັບລຳໃຫ້ອຸດົມສົມບູນຂຶ້ນໃນປັດຈຸບັນ. ສະນັ້ນ ຂັບງື່ມ ຫລື ສຳນຽງສຽງຂັບງື່ມກໍ່ໄດ້ຖືເອົາກຳເນີດມາຈາກການໄຫວ້ວອນຜີດັ່ງດຽວກັນກັບຂັບລຳອື່ນ ໆ ຢູ່ລາວຂອງພວກເຮົາ.

# ຂັບ ແລະ ລຳ ຕ່າງກັນແນວໃດ ?

ກ່ອນຈະໄປສູ່ການຮູ້ຈັກຄຳວ່າ : " **ຂັບງື່ມ** " ນີ້, ຢາກຈະໃຫ້ທ່ານຜູ້ອ່ານໄດ້ໄປແກ້ຂໍ້ຂ້ອງໃຈໃນຄຳວ່າ : " **ຂັບ ແລະ ລຳ** " ເສຍກ່ອນວ່າ ມີຄວາມແຕກຕ່າງກັນແນວໃດ.

ມີບາງຄົນໃຫ້ທັດສະນະແບບສ່ວນຕົວວ່າ : **ຂັບ ແລະ ລຳ** ນັ້ນມີຄວາມແຕກຕ່າງກັນ, ໂດຍການອ້າງເຫດຜົນແບບໂລນມາກ ມາປ້ອງກັນໃຫ້ທັດສະນະຂອງຕົນເປັນອັນຖືກ. ທີ່ຈິງແລ້ວ **ຂັບ ແລະ ລຳ** ແມ່ນອັນດຽວກັນ, ສ່ວນທີ່ແຕກຕ່າງກັນກໍ່ມີແຕ່ສຳນຽງ ຫລື ສຽງຂັບລຳເທົ່ານັ້ນເອງ, ທັງນີ້ເນື່ອງມາຈາກຈຸດພິເສດດ້ານການປາກເວົ້າ ມີສຳນຽງຕ່າງກັນໃນແຕ່ລະຊົນຊາດຊົນເຜົ່າ, ຈາກນັ້ນ ຈຶ່ງເຮັດໃຫ້ການຮຽກຊື່ວັດຖຸສິ່ງຂອງບໍ່ຄືກັນເຊັ່ນ : ບາງທ້ອງຖິ່ນເອີ້ນຊື່ມັນເຜົາວ່າ : " **ແອບລະແວກ** ", ບາງທ້ອງຖິ່ນເອີ້ນຊື່ຜັກບົ້ວງວ່າ: **ຜັກຢັນທ້າງ** ຫລື **ຜັກທໍ່ທໍາ.** ບາງບ່ອນກໍ່ຮ້ອງຊື່ໂຕແມວວ່າ " **ໂຕງ່າວ** ", ຍ້ອນແນວນັ້ນເອງການຮຽກຊື່ຂັບແລະລຳ ຈຶ່ງບໍ່ຄືກັນ.

ຊາວລາວນັບແຕ່ເຂດເໜືອຂອງແຂວງຄຳມ່ວນ ຂຶ້ນໄປເຖິງບັນດາແຂວງພາກເໜືອຂອງລາວ ນິຍົມກັນຮຽກຊື່ຂອງສິລະປະຂັບລຳວ່າ: " **ຂັບ** ", ແຕ່ຄ່າເຂດໃຕ້ຂອງແຂວງຄຳມ່ວນລົງໄປເຖິງບັນດາແຂວງພາກໃຕ້ນິຍົມກັນຮຽກວ່າ: " **ລຳ** ". ສິ່ງເຫລົ່ານີ້ເປັນໄປຕາມຄວາມຄຸ້ນເຄີຍ ຫລື ຈຸດພິເສດດ້ານສຳນຽງສຽງເວົ້າບໍ່ຄືກັນ, ປະຊາຊົນຄົນລາວນັບແຕ່ເຂດໃຕ້ຂອງແຂວງຄຳມ່ວນ ລົງໄປເຖິງບັນດາແຂວງພາກໃຕ້ ນິຍົມກັນຮຽກຊື່ຂອງແມ່ນ້ຳວ່າ: " **ເຊ** " ເຊັ່ນ: ເຊບັ້ງໄຟ, ເຊບັ້ງຫຽງ.... ສ່ວນແຕ່ຄ່າເຂດເໜືອຂອງແຂວງຄຳມ່ວນ ຂຶ້ນໄປເຖິງບັນດາແຂວງພາກເໜືອ ນິຍົມກັນຮຽກຊື່ແມ່ນ້ຳວ່າ: " **ນ້ຳ** " ເຊັ່ນ: ນ້ຳຫີນບູນ, ນ້ຳທອນ, ນ້ຳກະດິງ, ນ້ຳຊັນ.. ດັ່ງນີ້ເປັນຕົ້ນ. ນອກຈາກນີ້ ສຳນຽງສຽງເທດໜັງສືຂອງຄູບາຢູ່ໃນວັດກໍ່ບໍ່ຄືກັນ, ສ່ວນໜັງສືທີ່ນຳມາເທດນັ້ນແມ່ນອັນດຽວກັນ, **ຕົວຢ່າງ**: ການເທດລຳໃນເລື່ອງ " **ພະເວດສັນດອນ** " ກ້າເປັນພະຢູ່ໃນເຂດວຽງຈັນເພິ່ນກໍ່ຈະເທດ " ພະເວດ " ( ມະທີ ) ແບບຈັງຫວະ ຫລື ທຳນອງ " **ມະທີງື່ມທ່າ** ຫລື **ມະທີງື່ມທົ່ງ** " ແຕ່ກ້າເປັນພະຈາກເຂດໃຕ້ ເພິ່ນກໍ່ຈະເທດມະທີມາໃນຈັງຫວະ " **ກາເຕັ້ນກ້ອນ** " ກ້າເປັນພະຈາກຫລວງພະບາງ ເພິ່ນກໍ່ຈະເອົາທຳນອງແບບຫລວງພະບາງ. ສິ່ງດັ່ງກ່າວນີ້ຢັ້ງຢືນວ່າ ຄວາມແຕກຕ່າງກັນກໍ່ເປັນພຽງແຕ່ທຳນອງເທົ່ານັ້ນ ສ່ວນຊື່ຂອງໜັງສື ແມ່ນອັນດຽວກັນ, ສະນັ້ນ **ຂັບ ແລະ ລຳ** ກໍ່ແທ່ນອັນດຽວກັນ, ຕ່າງກັນແຕ່ດ້ານສຳນຽງເທົ່ານັ້ນເອງ. ອີກປະການໜຶ່ງ ຂັບ ແລະ ລຳ ມີພື້ນຖານຄຳກອນຜະຫຍາອັນດຽວກັນ, ຕ່າງແຕ່ວ່າ ມີຄຳກອນຜະຫຍາເພີ່ມຂຶ້ນ, ເນື່ອງມາຈາກຜູ້ແຕ່ງ ໄດ້ແຕ່ງຂຶ້ນໃໝ່ໃຫ້ອຸດົມສົມບູນ, ສ່ວນຄຳກອນທີ່ເປັນພື້ນຖານແທ້ນັ້ນ ແມ່ນອັນດຽວກັນ. ຜູ້ຂຽນເຄີຍໄດ້ໄປສຳຫລວດເອກະສານໃບລານເກືອບທຸກ ໆ ວັດໃນກຳແພງນະຄອນວຽງຈັນ, ແຂວງວຽງຈັນ ແລະ ແຂວງສະ

ຫວັນນະເຂດ. ສິ່ງທີ່ປາກົດອັນເດັ່ນຊັດ ກໍ່ຄືໄດ້ເຫັນລາຍກ້ອມ ແລະ ລາຍຍາວ ທີ່ບັນທຶກໄວ້ຊຶ່ງຄຳກອນຜະຫຍາອັນດິບເດີມໃນທຸກເຂດແມ່ນອັນດຽວກັນ. ນອກຈາກນີ້ຜູ້ຂຽນເຄີຍໄດ້ໄປຟັງ ແລະ ສັງເກດເບິ່ງໝໍ່ອັບ ໝໍ່ລຳ ທັງພາກໃຕ້ ແລະ ພາກເໜືອ, ກໍ່ສັງເກດເຫັນໄດ້ວ່າ ຄຳກອນອັນເດີມ ໆ ນັ້ນ ແມ່ນຄຳກອນຜະຫຍາອັນດຽວກັນ. ຍ້ອນແນວນັ້ນເອງ, ໝໍ່ອັບໝໍ່ລຳ ຈຶ່ງສາມາດນຳເອົາກອນຜະຫຍາຕ່າງ ໆ ໄປອັບລຳໄດ້. ຈະແມ່ນໝໍ່ອັບທາງເຂດເໜືອກໍ່ສາມາດນຳເອົາກອນລຳຂອງພວກໝໍ່ລຳໃຕ້ ມາອັບກໍ່ໄດ້ສະບາຍ, ໝໍ່ລຳໃຕ້ນຳເອົາກອນອັບຂອງໝໍ່ອັບທາງເໜືອໄປລຳກໍ່ໄດ້ສະບາຍ, ຕ່າງແຕ່ສຳນຽງເທົ່ານັ້ນ. ນອກຈາກນີ້ ດົນຕີທີ່ໃຊ້ປະສານສຽງອັນດິບເດີມກໍ່ແມ່ນດົນຕີອັນດຽວກັນຄື " **ແຄນ** ", ຕ່າງແຕ່ສຽງເປົ່າບໍ່ຄືກັນ ແຕ່ກໍ່ຫາກແມ່ນສຽງ **ແຄນ** ອັນດຽວກັນ.

ສະຫລຸບໄດ້ວ່າ : " **ອັບ ແລະ ລຳ** " ແມ່ນອັນດຽວກັນ, ຈຶ່ງບໍ່ຄວນສ້າງໃຫ້ສອງຄຳເວົ້ານີ້ເປັນບັນຫາສັບສົນ, ອັບ ແລະ ລຳ ພວກເຮົາສາມາດຮ້ອງຊື່ຄວບກັນເລີຍກໍ່ໄດ້ເຊັ່ນ : **ອັບລຳ** ຫລື ສິລະປະການອັບລຳ ດັ່ງນີ້ເປັນຕົ້ນ.

## I. ພູມສັນຖານແຂວງວຽງຈັນ ກົ່ນກໍາເນີດຂອງອັບງື່ມ.

ກ) **ທີ່ຕັ້ງຂອງແຂວງວຽງຈັນ :** ແຂວງວຽງຈັນເປັນແຂວງໃຫຍ່ມີອານາເຂດກວ້າງໄກ, ມີພົນລະເມືອງຫນາແຫນ້ນຜົສົມຄວນ ທັງປະກອບໄປດ້ວຍຫລາຍເຜົ່າຊົນທີ່ໄດ້ອາໄສຢູ່ຢ່າງເປັນກຸ່ມກ້ອນອັນພຽບ ພ້ອມໄປດ້ວຍຄວາມສະຫມານສາມັກຄີ ຢ່າງເປັນປຶກແຜ່ນໃຕ້ການນໍາພາຂອງອົງຄະນະພັກ ແຂວງວຽງຈັນ. ປະຊາຊົນພົນລະເມືອງສ່ວນໃຫຍ່ມີຕົ້ນກໍາເນີດມາຈາກອານາຈັກເມືອງພວນ ໃນເມື່ອກ່ອນ.

- ແຂວງວຽງຈັນສະຖິດຫມັ້ນຢູ່ທາງທິດເຫນືອ ຫ່າງຈາກກໍາ ແພງນະຄອນວຽງຈັນໄປປະມານ 40 ກິ ໂລແມັດ, ( ດ້ານເຫນືອຂອງກໍາແພງນະຄອນວຽງຈັນ ). ຍ້ອນເງື່ອນໄຂ ດັ່ງກ່າວຈຶ່ງເຮັດໃຫ້ແຂວງວຽງຈັນມີຄວາມສະດວກຫລາຍດ້ານໂດຍສະເພາະແມ່ນເສັ້ນທາງຄົມມະນາຄົມ, ການພັດທະນາເສດຖະກິດສັງຄົມ ຈະເລີນກ້າວຫນ້າວ່ອງໄວ.

- ພູມສະຖານແຫ່ງນີ້ ກໍາເນີດເກີດຂຶ້ນມາຕັ້ງຫລາຍຮ້ອຍປີແລ້ວ ! ແລະ ມີປະຫວັດສາດລະອຽດລະອ້ຽວຍາວໄກ, ເຊິ່ງເປັນພູມລໍາເນົາອຸດົມຮັ່ງມີໄປດ້ວຍທົ່ງຄັງ, ທົ່ງພຽງຍາວຢຽດໄປຕາມສອງແຄມຝັ່ງນໍ້າງື່ມ, ສາຍນໍ້າແຫລ່ງຊີວິດ, ທີ່ມາຂອງພືດພັນທັນຍາຫານອັນອຸດົມສົມບູນ. ແຂວງວຽງຈັນ ຍັງເປັນແຂວງທີ່ປະກອບໄປດ້ວຍຫລາຍພູຜາປ່າດົງທີ່ສະຫລັບຊັບແຊກກັບຫ້ວຍນໍ້າລໍາທານນ້ອຍໃຫຍ່, ມີສາຍນໍ້າງື່ມ ເປັນສາຍນໍ້າໃຫຍ່ໄຫລ ຜ່ານແຂວງ ແຕ່ເຫນືອເຖິງໃຕ້. ສາຍນໍ້າແຫລ່ງຊີວິດແຫ່ງນີ້ ເປັນສາງປາອັນມະຫຶມາ, ບໍ່ກໍາ ເນີດທາງດ້ານອຸດສາຫະກໍາ ແລະ ພະລັງງານຂອງຊາດລາວອີກດ້ວຍ. ບັນດາພາບພົດທີ່ກ່າວມານັ້ນເປັນສິ່ງປະກອບສ້າງເຮັດໃຫ້ແຂວງວຽງຈັນ ກາຍເປັນດິນແດນສຸຂາວະດີແຫ່ງ ຫນຶ່ງໃນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ຂ) ມູນເຊື້ອອັນດີງາມຂອງຊາວແຂວງວຽງຈັນ, ປະຊາຊົນພົນລະເມືອງ ໃນແຂວງວຽງຈັນມີມູນເຊື້ອດຸຫມັ່ນຂະຫຍັນພຽນ, ມີຫົວຄິດ ປະດິດສ້າງ, ຮັກການອອກແຮງງານ, ຫມັ່ນເພີ່ມພູນຜະລິດຜົນ ຫາລ້ຽງກຸ້ມຕົນເອງມາເປັນເວລາຊ້ານານ, ນອກນີ້ ເຂົາເຈົ້າກໍ່ຍັງເປັນຜູ້ມີມູນເຊື້ອພິລະອາດຫານ ໃນການປົກປັກຮັກສາ ດິນດອນຕອນຫຍ້າ, ຮັກສາບ້ານເກີດເມືອງນອນຂອງຕົນ ຢ່າງສະເຫມີຕົ້ນສະເຫມີປາຍ, ພຶດຕິກໍາດັ່ງກ່າວນີ້ ມັນໄດ້ສະແດງອອກໃນການຕໍ່ສູ້ຢ່າງພິລະອາດຫານຄາວສະໄຫມສົງຄາມສັກດີນາ ແລະ ສະໄຫມສົງຄາມຕໍ່ສູ້ກູ້ຊາດຕ້ານຈັກກະພັດຜູ້ຮຸກຮານ, ປະຊາຊົນແຂວງວຽງຈັນໄດ້ຍາດເອົາ ໄຊຊະນະເປັນກ້າວ ໆ ແລະປົດປ່ອຍ ດິນແດນບ້ານເກີດເມືອງນອນຂອງຕົນມາສູ່ຄວາມເປັນເອກະລາດໃນປີ 1975.

- ແຂວງວຽງຈັນ ຍັງມີຕົວເມືອງເກົ່າແກ່ຫລາຍຕົວເມືອງ ມີປະຫວັດສາດຍາວນານທີ່ຍັງປະກົດ ຕົວເປັນຮູບຮອຍເຖິງປັດຈຸບັນເຊັ່ນ : ເມືອງເກົ່າປາກແຈ້ງ, ເມືອງວຽງຄໍາ ແລະອື່ນ ໆ. ຍ້ອນ ແຂວງວຽງຈັນເປັນເຂດແຄ້ວນແດນອານາອັນເກົ່າແກ່ປະຊາຊົນພົນລະເມືອງ

ຈຶ່ງຕິດພັນຢູ່ກັບການເຊື່ອກືສາສະໜາພຸດມາຫລາຍເຊັ່ນຄົນ ແລະ ເປັນປັດໃຈເຮັດໃຫ້ແຂວງດັ່ງກ່າວ ມີມູນມໍລະດົກດ້ານວັດທະນະທໍາ ຫລາຍອັນປາກົດຕົວຈົນເຖິງທຸກວັນນີ້ເຊັ່ນ: ມີຮີດຄອງປະເພນີອັນດີງາມ, ມີການພົວພັນຊ່ວຍເຫລືອເກື້ອກູນເຊິ່ງກັນ ແລະ ກັນ, ມີມາລະຍາດສັງຄົມທີ່ເຕັມໄປດ້ວຍສຸດຈະລິດ 3 ຢ່າງປະຈໍາຕົວ, ພ້ອມນັ້ນເຂົາເຈົ້າກໍ່ຍັງຜູກພັນຢູ່ກັບຮີດ 12 ຢ່າງບໍ່ໄດ້ໄລລະ, ເພາະຮີດ 12 ນີ້ ເປັນມໍລະດົກອັນໜຶ່ງ ທີ່ສໍາຄັນທາງດ້ານວັດທະນະທໍາຮີດຄອງປະເພນີອັນດີງາມຂອງລາວເຮົາ.

- ສັນຍາລັກພິເສດ ທາງດ້ານວັດທະນະທໍາ ຫລື ບຸກຄະລິກຂອງປະຊາຊົນຊາວແຂວງວຽງຈັນນີ້, ເຂົາເຈົ້າເປັນຄົນຍັ້ມຫວານຂານມ່ວນ, ບໍ່ອວດອົ່ງທະນົງຕົວ ແລະ ທັງໄດ້ຊິງຕົວຢູ່ກັບມາລະຍາດສັງຄົມອັນໜ້າຮັກໄຄ່, ສິ່ງດັ່ງກ່າວໄດ້ສະທ້ອນອອກມາທາງດ້ານກາຍຍະອິນຊີຄື: ກາຍ, ວາຈາ ແລະ ໃຈອັນຮຽບຮ້ອຍຢູ່ສະເໝີ, ສັນຍາລັກນີ້ຕົກທອດມາແຕ່ບູຮານນະການຈົນກາຍເປັນດວງວິນຍານ ແລະ ເຂົາເຈົ້າກໍ່ໄດ້ປູກຝັງມູນມໍລະດົກເຫລົ່ານີ້ໄວ້ໃຫ້ລູກໃຫ້ຫລານສືບ ໆ ມາ.

- ລັກສະນະພິເສດທາງດ້ານວັດທະນະທໍາ ທີ່ເປັນອາຫານດ້ານຈິດໃຈ ຊຶ່ງບໍ່ເຄີຍເຫືອດແຫ້ງໄປຈາກຊາວແຂວງວຽງຈັນນັ້ນກໍ່ຄື " ຂັບງື່ມ " ຂັບງື່ມເປັນພື້ນຖານດ້ານສິລະປະວັນນະຄະດີທີ່ມີຄ່ານິຍົມຕະຫລອດມາ ແລະ ເປັນອາຫານດ້ານຈິດໃຈ ທີ່ໃຫ້ຄວາມບັນເທີງມາຫລາຍເຊັ່ນຄົນແລ້ວ. ຈະເປັນງານປະເພນີ ທີ່ມີການຄົບງັນຕ່າງ ໆ ໃນຊຸມນຸມຊົນເຂດນີ້, ຖ້າຫາກຂາດຂັບງື່ມໄປ, ກໍ່ດູເໝືອນວ່າ ງານນັ້ນຊິງຕົວຢູ່ກັບຄວາມງຽບເຫງົາເປົ່າໃຈ. ສະນັ້ນຂັບງື່ມຈຶ່ງເປັນພື້ນຖານແຫ່ງຄວາມບັນເທີງອັນເຖິງຕາເຖິງໃຈ ແລະ ໂດດເດັ່ນກວ່າລໍາອື່ນ ໆ ໃນແຂວງວຽງຈັນ.



## ຄ) ຂັບງື່ມ ສິລະປະວັນນະຄະດີປະຈຳແຂວງວຽງຈັນ ກໍ່ຄືຂອງຊາດລາວເຮົາ.

- ຂັບງື່ມ ແມ່ນສິລະປະວັນນະຄະດີອີກປະເພດຫນຶ່ງ ໃນຈຳນວນຂັບລຳທັງຫລາຍທີ່ຍັງຄົງຕົວ ແລະ ຂະຫຍາຍຕົວຢູ່ໃນລາວເຮົາ ເຊິ່ງມີຄ່ານິຍົມສູງສົ່ງຫລາຍທີ່ສຸດໂດຍສະເພາະແມ່ນຢູ່ໃນແຂວງວຽງຈັນ ກໍ່ຄືຢູ່ກຳແພງນະຄອນວຽງຈັນ. ຂັບງື່ມເປັນປະເພດ ຂັບລຳທີ່ມີມາແຕ່ບູຮານນະການ, ມີຄວາມຄົງຕົວຢ່າງສືບເນື່ອງຕໍ່ໃສ່ຮຸ່ນຄົນຕ່າງ ໆ ຈົນເຖິງປັດຈຸບັນ ແລະ ທັງເປັນມູນມໍລະດົກອັນລ້ຳຄ່າດ້ານສິລະປະວັດທະນະທຳຂອງຊາດລາວທັງເປັນພູມປັນຍາຂອງບັນພະບູລຸດລາວໄດ້ປະດິດຄິດສ້າງໄວ້ໃຫ້ໃນດ້ານຮູບແບບ ແລະ ທຳນອງເຊິ່ງເປັນສິ່ງທີ່ຫາໄດ້ຍາກ.
- ຜ່ານມາ ຍ້ອນປະຫວັດສາດການດຳລົງຊີວິດ ຫລື ການປ່ຽນແປງທາງສັງຄົມໃນແຕ່ລະຍຸກໄດ້ຜັນແປໄປຕາມກາລະໂອກາດຂອງລະບອບການປົກຄອງ ທີ່ບໍ່ແນ່ນອນໃນເມື່ອກ່ອນ, ຂັບງື່ມປະເພດນີ້ກໍ່ໄດ້ປ່ຽນແປງໄປຕາມກາລະຍຸກ ຂອງຂະບວນວິວັດດ້ານສັງຄົມ ຫລື ເວົ້າອີກຢ່າງຫນຶ່ງວ່າ : ຂັບລຳປະເພດນີ້ໄດ້ອຽງຕົວເຂົ້າສູ່ແຕ່ລະຍຸກ, ແຕ່ລະ ໆ ບອບການປົກຄອງ, ເຊິ່ງສາມາດເຮັດໃຫ້ສັງຄົມຮັບຮອງ ແລະ ມີຄ່ານິຍົມມາຕະຫລອດ. ຍ້ອນແນວນັ້ນເອງຂັບງື່ມຈຶ່ງຍືນຍົງຄົງຕົວ ແລະ ຕົກທອດມາເຖິງປັດຈຸບັນນີ້. ແຕ່ຢ່າງໃດກໍ່ຕາມຂັບງື່ມມີບາງຍຸກກໍ່ມີລັກສະນະບໍ່ໂດດເດັ່ນ, ຄ້າຍກັບວ່າຈະຫມົດຄ່ານິຍົມລົງ, ແຕ່ມີບາງຍຸກກໍ່ມີຄວາມໂດດເດັ່ນເປັນປະຈັກເຊັ່ນ ໃນຍຸກປັດຈຸບັນ, ຍຸກທີ່ມີພັກ-ລັດນຳພາ ແລະ ສົ່ງເສີມ ເຮັດໃຫ້ສິລະປະວັນນະຄະດີພົ້ນເດັ່ນຂຶ້ນ ເພື່ອເປັນການອະນຸລັກໄວ້ຊຶ່ງສິລະປະວັດທະນະທຳ ຂອງຊາດລາວເຮົາໃຫ້ຍືນຍົງຄົງຕົວ ແລະ ຂະຫຍາຍຕົວ, ທັງເປັນສິ່ງທີ່ເອກອ້າງທະນົງໃຈອັນສູງສົ່ງຂອງລາວເຮົາ.
- **ຂັບງື່ມ** ເປັນຂັບລຳອີກປະເພດຫນຶ່ງ ທີ່ໃຊ້ຂັບຕາມແບບຄຳກອນ ຫລື ຄຳຜະຫຍາຍ່ອຍເອີ້ນວ່າ " ຫມໍລຳຜະຫຍາ " ກໍ່ວ່າໄດ້. ພ້ອມນັ້ນ ຂັບງື່ມກໍ່ສາມາດຂັບໄດ້ທຸກກາບກອນ ເຊັ່ນ : ກອນອ່ານ, ກອນຜະຫຍາຍ່ອຍ, ກອນລຳທຳມະດາຕະຫລອດຮອດກອນກາບກອນເຊື້ອຕ່າງ ໆ ເຫມືອນກັນກັບຂັບລຳອື່ນ ໆ ທີ່ເປັນສິລະປະວັນນະຄະດີຂອງລາວເຮົາ, ສິ່ງທີ່ຂັບງື່ມແຕກຕ່າງຈາກຂັບລຳປະເພດອື່ນກໍ່ພຽງແຕ່ດ້ານທຳ ນອງ ຫລື ສຳນຽງສຽງຂັບເທົ່ານັ້ນເອງ, ເພາະມັນຂຶ້ນຢູ່ກັບຈຸດພິເສດ ແລະ ສຳນຽງພາສາປາກເວົ້າ ຂອງ ແຕ່ລະເຜົ່າຊົນ ໃນທ້ອງຖິ່ນຕ່າງ ໆ ທີ່ແຕກຕ່າງກັນໄປ.



## II. ຂັບງື່ມ ສິລະປະວັນນະຄະດີພື້ນເມືອງລາວ.

### 1. ຕົ້ນກຳເນີດຂອງ ຂັບງື່ມ.

ຂັບງື່ມ ( ລຳຂັບງື່ມ ) ກ້າອີງຕາມການບອກເຫລົ່າຂອງບັນດາເຈົ້າກົກຢູ່ເຂດແຂວງວຽງຈັນ ກໍ່ຄືຢູ່ເຂດລອງງື່ມໄດ້ໃຫ້ທັດສະນະກົງໄປກົງມາ ແລະ ກົງກັນອີກ ເຊັ່ນ: ອາຈານຊາທອມ ໄວ 87 ປີ ຢູ່ບ້ານ ຫນອງພົງ ເມືອງທຸລະຄົມ ແຂວງວຽງຈັນ, ອາຈານຊາທອມ ເປັນຜູ້ມີພູມປັນຍາ ແບບພື້ນບ້ານຢ່າງຫລາກຫລາຍ ເຊັ່ນ : ປະຫວັດສາດແບບບອກເຫລົ່າ, ບູຮານຄະດີ, ພຸດທະສາດ ແລະ ວັນນະກຳຕ່າງ ໆ. ອາຈານຊາທອມ ມີຕົ້ນກຳ ເນີດມາຈາກເມືອງພວນຊຽງຂວາງ, ອາຈານໄດ້ໃຫ້ທັດສະນະວ່າ : ຂັບງື່ມມີຕົ້ນກຳເນີດມາຈາກຊົນເຜົ່າປະສົມແຫ່ງຫນຶ່ງໃນແຂວງວຽງຈັນສະໄຫມກ່ອນ, ຊົນເຜົ່າປະສົມເຫລົ່ານີ້ຍັງມີຕົ້ນກຳເນີດມາຈາກພວກ " ຂ້າຍາງແດງ " ກ່ອນນີ້ປະມານ 1.000 ກວ່າປີ, ຊົນເຜົ່າຍາງແດງດັ່ງກ່າວ ໄດ້ຕັ້ງກົກການຢູ່ເຂດບ້ານຫລົ່ງຊັນ ເມືອງທຸລະຄົມ ແຂວງວຽງຈັນ ໃນປັດຈຸບັນ. ສັນນິຖານວ່າ ອາດຈະເປັນພວກມອນ-ຂະແມ ຫລື ພວກຂອມນັ້ນເອງ. ບ້ານຫລົ່ງຊັນກ່ອນນີ້ 1. 000 ກວ່າປີມີຊື່ວ່າ " ເມືອງທົ່ງຄຳ " ເປັນຕົວເມືອງເກີດກ່ອນເມືອງວຽງຄຳ-ໄຜ່ ຫນາມ. ເມື່ອເກີດສົງຄາມເຈືອງໃນສະໄຫມ 800 ປີຫລັງ ພວກຂ້າຍາງແດງເຫລົ່ານີ້ໄດ້ແຕກສະຫລຸພ່າຍອອກໄປຫລາຍທົ່ນແຫ່ງ, ສ່ວນທີ່ຍັງເສດເຫລືອເຂົາເຈົ້າກໍ່ໄດ້ປະສົມປະ ສານຢູ່ກັບຄົນພື້ນເມືອງທີ່ຍົກຍ້າຍມາຈາກພາກເຫນືອ, ສັນນິດຖານວ່າ : ( ອາດຈະເປັນພວກລາວຫນອງແສ ຄ.ສ.1757). ບັນດາຄົນພື້ນເມືອງ ແລະ ຂ້າຍາງແດງກາຍເປັນເຜົ່າປະ ສົມຢູ່ດອນກັນ. ຊົນເຜົ່າປະສົມເຫລົ່ານີ້

ບັບກືສາສະໜາຜີ ເພື່ອເປັນທີ່ເພິ່ງທາງໃຈ ແລະ ກືກັນມາເປັນລຳດັບ. ເຂົາເຈົ້າມີພິທີບວງສວງໄຫ້ວວອນຜີຕາມລະດູການ, ເວລາທຳພິທີບວງສວງນີ້ໄດ້ມີຄຳເວົ້າທີ່ຈົ່ມອອກມາເປັນທຳນອງແບບປາກເປົ່າ ( ພາສາ ວັນນະຄະດີຕາມແບບຮ້ອຍກອງ ແລະ ຮ້ອຍແກ້ວທີ່ມີເນື້ອໃນໃຈຄວາມແບບເກາະກ່າຍກັນ, ບົ່ມຊ້ອນໄວ້ເຊິ່ງຄວາມສະທ້ອນໃຈ ) ທັງນີ້ເພື່ອເປັນການຂໍຂະມະໂທດ ຫລື ອ້ອນວອນຂໍຄວາມຊ່ວຍເຫລືອຕາມການເຊື່ອຖືຂອງເຂົາເຈົ້າ.

ຂັບງື່ມໄດ້ມີພື້ນຖານ ຫລື ໄດ້ທຳນອງທີ່ກ່າຍທອດມາຈາກການໄຫ້ວວອນໃນພິທີບວງສວງ ແລະ ໄດ້ສວມວິນຍານໃຫ້ແກ່ນັກເທດ, ນັກອ່ານໜັງສື ຫລື ການຈ່າຍກອນຜະຫຍາໃນເວລາສາສະ ໜາພຸດເຂົ້າມາໃນເຂດງື່ມນີ້, ພ້ອມນັ້ນກໍ່ໄດ້ຂະຫຍາຍຕົວຂຶ້ນຕາມຂັ້ນຕອນຂອງກາລະສະໄໝ ຂອງເມືອງທົ່ງຄຳ, ອັນເປັນເມືອງບູຮານແຫ່ງນີ້. ຈາກນັ້ນມານັບເປັນຫລາຍຮ້ອຍປີ, ພູມປະເທດເຂດນີ້ຄ່ອຍ ໆ ຫຍັບເຂົ້າສູ່ຄວາມ ສີວິໄລທາງດ້ານວັດຖຸ ແລະ ຈິດໃຈຕາມເງື່ອນໄຂຂອງສະພາບເປັນລຳດັບມາ. ໃນຂະບວນວິວັດດັ່ງກ່າວນີ້, ເມືອງທົ່ງຄຳກໍ່ບໍ່ໝັ້ນຄົງ, ເພາະໄດ້ຖືກແຕກຮ້າງຍ້ອນສົງຄາມສັກດີນາ ແຕ່ບໍ່ຊາບວ່າໃນສະໄໝໃດ. ຂໍ້ມູນທາງປະຫວັດສາດຈາກໜັງສືຜູກໃບລານຢູ່ວັດກາງບ້ານຫລິ່ງຊັນຂຽນໄວ້ວ່າ: ເມືອງທົ່ງຄຳ ແມ່ນສະໄໝ ຈ . ສ 114 ປັດ ຈຸບັນໄດ້ 1245 ປີແລ້ວ, ແຕ່ສະເພາະເມືອງທົ່ງຄຳໄດ້ແຕກ ຮ້າງໄປນັ້ນແມ່ນ ຕົກຢູ່ໃນປະມານ ຈ . ສ 904 ປັດຈຸບັນໄດ້ປະມານ 455 ປີແລ້ວ. ອີງຕາມສີລາຈາລຶກ ແລະ ເອກະສານໃບລານຢູ່ວັດກາງບ້ານຫລິ່ງຊັນໄດ້ບອກເຖິງຂອບເຂດເມືອງທົ່ງຄຳ ວ່າ ດັ່ງນີ້ : " **ພະຍາອະໄພເປັນເຈົ້າເມືອງກ່ອນເພິ່ນ, ເມືອງນັ້ນເອີ້ນວ່າ ເມືອງທົ່ງຄຳ ( ບ້ານຫລິ່ງຊັນ ), ມີຕຳນານໜຶ່ງເວົ້າວ່າ ( ເພິ່ນບໍ່ໄດ້ອອກໄປລ່າເນື້ອ, ມີຟານກາຍເປັນປອບ ໄປ ກິນຄົນ ). ທາດສາມໜ່ວຍແມ່ນທາດອະທິການວັດທັງສາມວັດ. ເມືອງທົ່ງຄຳ ຈ.ສ 114 , ຂອບເຂດ ເມືອງ: ຂອນໄມ້ໄຜ່ໃຫ້ໄຜ່ຜີພາຍ ໂພສາມຕົ້ນອົ້ນສາມຂວາຍ ( ໂພນໂຮງ, ໂພນສີ, ໂພນແກ້ວ ), ຄູຄັນນາໜອງແກ້ວ. ນາອ້ອຍມ້ອຍອອຍໜອງ, ຕີນບ້ານຊ້າງຄູ່ ຂອນໄມ້ໃຫຍ່ຢູ່ບ້ານຊ້າງຄູ່ ຍາງເທາະແກ້ວໝາກເຟືອງໜອງສະໃຫຍ່ ໆ ເມືອງທົ່ງຄຳ ສາລາຕົ້ນເຜີ້ງ ທອຍຊາຍຂາວ** " ດັ່ງນີ້ເປັນຕົ້ນ.

ເຖິງວ່າ ເມືອງທົ່ງຄຳໄດ້ແຕກຮ້າງໄປແລ້ວກໍ່ຕາມ, ບ້ານຫລິ່ງຊັນ ກໍ່ຍັງເປັນບ້ານເກົ່າເມືອງເດີມ, ເປັນໃຈກາງທາງດ້ານເສດຖະກິດ ແລະ ວັດທະນະທຳຕະ ຫລອດມາ ແລະ ມີສັນຍາລັກທາງດ້ານສີລະປະວັດທະນະທຳຍືນຍົງຄົງຕົວ.

ມາເຖິງປີ 1353 ເຈົ້າຟ້າງຸ່ມ ໄດ້ນຳເອົາສາສະໜາພຸດເຂົ້າມາລາວ, ( 600 ປີຫລັງ) ຊາວລາວໄດ້ມີທີ່ເພິ່ງທາງຈິດໃຈຫລາຍຂຶ້ນ ພ້ອມນີ້ກໍ່ເກີດມີອັນປ່ຽນແປງໃໝ່ຢ່າງມະຫຶມາ ເພາະຫລັກທຳຄຳສອນ ຂອງພຸດທະສາສະໜາມີເຫດຜົນ ດີກວ່າການຖືຜີ ແລະ ຖືພາມ, ພ້ອມນັ້ນກໍ່ເຫັນໄດ້ສັດຈະທຳທີ່ມີທາງອອກອັນດີ. ເຮັດໃຫ້ຫລາຍທົ້ນແຫ່ງເກີດມີວັດວາອາຮາມ

ຫລາຍຂຶ້ນ, ໃນວັດກໍ່ມີຫລາຍຄຳພີດີກາ, ມີນິທານ ວັນນະກຳ, ນິທານຄຳສອນທີ່ ອຸດົມສົມບູນ ແລະ ຮັ່ງມີໄປດ້ວຍວັນນະຄະດີ, ກາບກອນໂຄງສານຕ່າງ ໆ ຢ່າງຫລາກຫລາຍເຊັ່ນ : ນິຍາຍທຳມະ, ນິທານພື້ນເມືອງ ແລະ ເລື່ອງຊາດົກຕ່າງ ໆ, ຈົນວ່າ ວັດໄດ້ກາຍເປັນຫໍສະໝຸດ ກາງ ( ຫໍໄຕ ) ປະຊາຊົນພົນລະເມືອງມີຈິດໃຈສັດທາອັນແຮງກ້າ ແລະ ຖືເອົາການສະຫລະ ອອກບວດຮຽນຂຽນອ່ານ ເປັນສິ່ງສຳຄັນອັນໜຶ່ງ ໃນຊາຕາຊີວິດຂອງຕົນ. ຢູ່ແຕ່ລະ ບ້ານຈຶ່ງ ເຕັມໄປດ້ວຍນັກປາດອາຈານ ມີທັງນັກເທດ, ນັກອ່ານນິທານວັນນະກຳ ແລະ ມີນັກປະຕິພານ ຢ່າງມາກມາຍ, ຊຶ່ງອຸດົມສົມບູນໄປດ້ວຍເນື້ອຫາສາລະ. ມີການປະດິດຄິດແຕ່ງທຳນອງເທດ ສູດຂຶ້ນມາຫລາຍຢ່າງເຊັ່ນ: ທຳນອງເທດມະຫາ ( ຊາດົກຕ່າງ ໆ ) ໂດຍມີຄ່ານິຍົມຢ່າງສູງ ສົ່ງຈາກ " ມະຫາສ້ອຍ, ຊຸຍສ້ອຍ " ນອກນີ້ຍັງມີທຳນອງໃນການອ່ານໜັງສືພື້ນເມືອງ ເຊັ່ນ : ກາລະເກດ, ສິນໄຊ, ແຕງອ່ອນ ແລະ ອື່ນ ໆ.

ສະເພາະຢູ່ໃນບ້ານຫລິ່ງຊັນນີ້ ໄດ້ເລີ່ມມີວັດວາສາສະໜາ ( ພຸດ ) ຂຶ້ນມາກ່ອນນີ້ປະ ມານ 400 ກວ່າປີ, ແຕ່ອີງໃສ່ຫີນສີລາຈາລຶກ ຢູ່ໃນວັດກາງບ້ານຫລິ່ງຊັນໄດ້ຂຽນໄວ້ວ່າ : ວັດ ກາງບ້ານຫລິ່ງຊັນໄດ້ຕັ້ງ ຂຶ້ນກ່ອນນີ້ 200 ປີ; ແລະ ຍັງບອກວ່າ ( ພະຍາອະໄພເປັນພະຍາ ເມືອງຫົງຄຳ ) ໃນສະໄໝນີ້ ເມືອງຫົງຄຳ ຫລື ບ້ານຫລິ່ງຊັນຈຶ່ງເປັນບ່ອນຈະເລີນດ້ານວັດ ທະນະທຳ ຫລື ອຸດົມສົມບູນໄປດ້ວຍນັກປາດອາຈານ ແລະ ຄຳພີດີກາຕ່າງ ໆ ຕະຫລອດເຖິງ ມີຮອດນັກເທດ ນັກປະຕິພານຢ່າງມາກມາຍ. ແຕ່ເມື່ອໄລຍະທີ່ເມືອງຫົງຄຳໄດ້ແຕກຮ້າງ ຍ້ອນສົງຄາມ ສັກດີນານັ້ນ ເມືອງຫົງຄຳ ກໍ່ຍັງຄົງເຫລືອໄວ້ແຕ່ຊື່ວ່າ " ບ້ານຫລິ່ງຊັນ " ເທົ່ານັ້ນ. ຢ່າງໃດກໍ່ຕາມສັນນິດຖານໄດ້ວ່າ : ທຳນອງ ຫລື ສຳນຽງຂອງການເທດສູດ ແລະ ການອ່ານ ໜັງສືໃນເຂດນີ້ ແມ່ນໄດ້ຮັບເອົາສືບຊາດຍານມາຈາກຄຳໄຫ້ວອນຜີ ຂອງພວກຊົນເຜົ່າປະ ສົມທີ່ເອົາ ກຳເນີດມາຈາກພວກຂ້າຍາງແດງກ່ອນນັ້ນ.

24/7VII ຫ້າມຈຳໜ່າຍ

ຫລັງຈາກນັ້ນຕໍ່ມາກໍ່ເກີດມີສົງຄາມສັກດີນາສະຫຍາມຮຸກຮານລາວໃນປີ 1778, ເກີດ ມີຜົນສະທ້ອນໄປຫລາຍອານາຈັກຂອງລາວ, ໃນນີ້ອານາຈັກເມືອງພວນກໍ່ຖືກພວກສັກດີນາ ສະຫຍາມບຸກໜັກເຮັດໃຫ້ຊົນເຜົ່າລາວພວນຖືກກວາດຕ້ອນ ຫລື ອົບພະຍົບລົງມາຈາກບ້ານ ບານ ເມືອງຄຳ, ອານາຈັກເມືອງພວນ ( ຊຽງຂວາງ ). ສະ ເພາະ ຊາວເມືອງພວນທີ່ຖືກອົບ ພະຍົບລົງມານີ້,ໄດ້ມາຕັ້ງຫລັກຖານຢູ່ເລາະລຽບສອງແຄມຝັ່ງນ້ຳງື່ມຢ່າງມາກມາຍ. ຄັ້ງ ແຮກໄດ້ຍ້າຍມາຕັ້ງກຸ່ມຖານຢູ່ບ້ານກ້ວຍເປັນເວລາ 3 ປີ, ແລ້ວກໍ່ລົງມາຢູ່ເມືອງສອນມອນ 3 ປີ, ຈາກນັ້ນກໍ່ຫຍັບຍ້າຍລົງມາຕັ້ງຢູ່ບ້ານປາກກະຍູງ ເປັນເວລາ 3 ປີ, ຫລັງຈາກນັ້ນຊາວອົບ ພະຍົບເຫລົ່ານີ້ ກໍ່ໄດ້ແຍກຍ້າຍກັນອອກໄປຕັ້ງກຸ່ມຖານຢູ່ນາຫລ້າ ( ທາດນາຫລ້າ ) ແຕ່ບໍ່ຮູ້ ວ່າໄດ້ຈັກປີ. ຢູ່ນາຫລ້ານີ້ໄດ້ກາຍເປັນບ້ານໃຫຍ່ ທີ່ມີຄວາມຈະເລີນສີວິໄລຂຶ້ນມາຢ່າງໄວວາ ຈົນສາມາດມີຮອດວັດວາອາຮາມ, ມີທາດເຈດີ ແລະ ມີນັກປາດອາຈານຢ່າງຫລວງຫລາຍ,

ແຕ່ຕົກມາເຖິງສະໄຫມຫນຶ່ງ, ນາຫລ້າເກີດມີພະຍາດຕິດແປດ ( ອີ້ທູດ ) ແຜ່ລະບາດຈຶ່ງພາກັນແຕກບ້ານຮ້າງເມືອງ; ສ່ວນຫນຶ່ງຍ້າຍໄປຕັ້ງບ້ານຢູ່ພະທາວ, ຕານປ່ຽວ, ນາແພງ ແລະອີກຈຳນວນກຸ່ມໃຫຍ່ກຸ່ມຫນຶ່ງ ໄດ້ຍ້າຍໄປຢູ່ກັບຊົນເຜົ່າປະສົມທີ່ບ້ານຫລິ່ງຊັນ. ຈຳນວນທີ່ໄດ້ໄປຢູ່ບ້ານຫລິ່ງຊັນນີ້ໄດ້ຮັບຄວາມຈະເລີນສີວິໄລທາງດ້ານຈິດໃຈຢ່າງໄວວາ, ເນື່ອງຈາກຄົນພື້ນເມືອງຢູ່ແຫ່ງນີ້ໄດ້ສ້າງວັດໆປັດໃຈໄວ້ກ່ອນແລ້ວເຊັ່ນ : ມີບຸນສິນກິນທານ, ມີການຄົບງັນໃນຮີດຄອງປະເພນີຕ່າງ ໆ ໂດຍມີການອ່ານຫນັງສືນິທານວັນນະກຳໃຫ້ກັນຟັງ, ມີການຈ່າຍກອນຜະຫຍາຕໍ່ແຍ ກັນລະຫວ່າງບ່າວສາວ ( ແບບຕອບແກ້ ). ຈາກການຈ່າຍກອນຜະຫຍາຕໍ່ແຍກັນແບບປາກເປົ່າຢູ່ບ້ານຫລິ່ງຊັນນີ້ເອງ, ຈຶ່ງກໍ່ໃຫ້ເກີດມີສຳນຽງ ຫລື ທີ່ມາຂອງ " ຂັບງື່ມ " ໃນປັດຈຸບັນ. ໃນສະໄຫມນີ້ຢູ່ທາງວັດກໍ່ມີນັກເທດລຳໃນນິທານຊາດົກຕ່າງ ໆ ປະ ເພດຮ້ອຍກອງ ຫລື ຮ້ອຍແກ້ວໂດຍມີຈັງຫວະ ຫລື ທຳນອງທີ່ຄົງຕົວ ແລະ ແນ່ນອນ, ເຮັດໃຫ້ສັງຄົມຢູ່ເຂດຫລິ່ງຊັນໃນສະໄຫມນີ້ມີຄວາມປະທັບໃຈ ແລະ ຮູ້ສຶກໃນຄວາມ ບັນເທີງຢ່າງສຸດຊຶ້ງ. ພວກອ້າຍຈານ, ອ້າຍທິດ ແລະ ອ້າຍຊຽງທີ່ສິກອອກຈາກວັດໄປແລ້ວ, ກໍ່ຍັງຄົງອົມເອົາສຽງຄໍນັກເທດອອກມານຳ, ເພື່ອມີຈຸດປະສົງ ຈະໄດ້ອ່ານຫນັງສືນິທານວັນນະກຳ, ນິທານຄຳ ກອນໃຫ້ຄົນອື່ນຟັງໃນຍາມບຸນປະເພນີຕ່າງ ໆ ເຊັ່ນ: ງັນເຮືອນດີເປັນຕົ້ນ. ຄົນຈຳນວນສ່ວນຫລາຍຢູ່ ເຂດຫລິ່ງຊັນນີ້ໄດ້ຮັບພູມຄວາມຮູ້ດ້ານການສຶກສາມາຈາກວັດຄືກັບແຫ່ງອື່ນ ໆ ໃນລາວເຊັ່ນ : ພຸດທະສາດ, ວັນນະຄະດີບວກ ກັບພູມປັນຍາຊາວບ້ານ ທີ່ມີເງື່ອນໄຂຊອກມາຫາໄດ້.



**ວັດກາງ ບ້ານຫລິ່ງຊັນ**

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ